Souphanouvong University Journal of Multidisciplinary Research and Development
2026, Vol. 12, 04F, 98-105
https://doi.org/10.69692/SUJMRD1204F98

Factors Affecting Access to Microfinance Institutions for MSMEs Entrepreneurs in Boun Neua District, Phongsaly Province

BounLom Hongkham[1*], Bounthavy Siphanthong[2], Southavone Sioudomphan[3]

Industry and commerce Department Phongsaly Province, Lao PDR

**Correspondence:*
BounLom Hongkham, Industry and commerce Department Phongsaly Province, Tel: +8562022998808, Email: Bounlom998899@gmail.com

Article Info:

Submitted: October 10, 2026
Revised: October 22, 2026
Accepted: November 05, 2026

Abstract

This research aims to study the business conditions and access to microfinance institutions for MSMEs entrepreneurs and The importance of factors affecting access to microfinance institutions for MSMEs entrepreneurs in Bounneua District, Phongsaly Province. A questionnaire was used as a tool to collect data from a group of MSMEs entrepreneurs in Bounneua District, Phongsaly Province, who are target customers of microfinance institutions. This research is a quantitative study, starting with describing the data changes in descriptive statistics with frequency values, percentages, mean values, and standard deviations.

The results found that the business conditions and access to sources of finance of MSMEs entrepreneurs in Bounneua District, Phongsaly Province, found that business operations are individual enterprises that include the trade, production, and service sectors. The business period is 5-10 years, and the purpose of running the business is personal preference. The source of start-up capital for business operations is self-funding, and the source of revolving capital for business operations is from loans from microfinance institutions. In terms of access to sources of finance from microfinance institutions, MSMEs entrepreneurs can access sources of finance (approved) for only 39% of them, while the rest still do not have access to sources of finance. The importance of factors affecting access to capital includes the following: Collateral, Capital, Capacity, and Cost of capital, Control & Compliance, Character, Business, and Process. Entrepreneurs assign the highest importance to these factors, respectively. Entrepreneurs give the medium importance to economic conditions. However, overall, the importance of factors affecting access to capital is the highest with a mean value of 4.37 and a standard deviation of 0.48.

Keyword: *Factors affecting, Microfinance institutions, Entrepreneurs*

1. ພາກສະເໜີ

ການເຂົ້າເຖິງແຫຼ່ງເງິນທຶນຂອງພາກທຸລະກິດ ແລະ ພາກຄົວເຮືອນເປັນສ່ວນໜຶ່ງຂອງບັນຫາດ້ານການເງິນທີ່ສຳຄັນ ເພາະວ່າເງິນທຶນເປັນປັດໄຈຫຼັກໃນການສົ່ງເສີມ ແລະ ການເພີ່ມການຜະລິດໃຫ້ຂະຫຍາຍຕົວ, ເມື່ອຂາດປັດໄຈດ້ານເງິນທຶນໄດ້ກາຍເປັນສາເຫດຕົ້ນຕໍທີ່ເຮັດໃຫ້ເກີດຄວາມບໍ່ສົມບູນຂອງຕະຫຼາດ ເຊິ່ງຈະສົ່ງຜົນໃຫ້ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ລວມເຖິງຄອບຄົວທີ່ມີລາຍໄດ້ບໍ່ສະໜ່ຳສະເໜີ ຫຼື ມີລາຍໄດ້ນ້ອຍບໍ່ສາມາດເພີ່ມກຳໄລຈາກການລົງທຶນ ຫຼື ການບໍລິໂພກຕາມຄວາມຕ້ອງການ ເຊິ່ງບັນຫາດັ່ງກ່າວນີ້ຈະນຳໄປສູ່ການຂະຫຍາຍຕົວທາງດ້ານເສດຖະກິດຂອງປະເທດຢູ່ໃນລະດັບຕ່ຳກວ່າການຂະຫຍາຍຕົວທີ່ແທ້ຈິງ. ດ້ວຍເຫດຜົນດັ່ງກ່າວນັ້ນພັກ ແລະ ລັດຖະບານ ສປປ ລາວ ຈຶ່ງມີມາດຕະການແກ້ໄຂການການສົ່ງເສີມການເຂົ້າເຖິງແຫຼ່ງເງິນທຶນ ເພື່ອຊຸກຍູ້ການຜະລິດພາຍໃນປະເທດ ໂດຍພັດທະນາກົນໄກການລະດົມແຫຼ່ງເງິນທຶນ ແລະ ກຳນົດນະໂຍບາຍສົມເຊື່ອໃນລະດັບມະຫາພາກພ້ອມທັງຊຸກຍູ້ໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸນລະພາກ ປະກອບສ່ວນສ້າງຄວາມເຂັ້ມແຂງດ້ານແຫຼ່ງເງິນທຶນ ໃຫ້ແກ່ການຜະລິດສິນຄ້າທີ່ຈຳເປັນ, ທົດແທນການນຳເຂົ້າ ແລະ ເພື່ອການສົ່ງອອກ ໂດຍສະເພາະຕິດພັນກັບກິດຈະການທີ່ຄົນ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

ລາວ ເປັນເຈົ້າຂອງ ຫຼື ຖືຮຸ້ນ, ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ການພັດທະນາຊັບພະຍາກອນມະນຸດ, ວຽກງານສາມສ້າງ ແລະ ຈຸດສຸມຂອງລັດຖະບານ, ປັບປຸງການເຂົ້າເຖິງແຫຼ່ງສິນເຊື່ອ MSMEs ໂດຍສະເພາະປັບປຸງເງື່ອນໄຂທີ່ບໍ່ສອດຄ່ອງ, ຫຼຸດຂັ້ນຕອນ ແລະ ຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ ເພື່ອສະໜອງແຫຼ່ງເງິນທຶນໃຫ້ MSMEs ທີ່ເຮັດແທ້ທຳຈິງ ແລະ ໃຫ້ທົ່ວເຖິງ (Ministry of Planning and Investment, 2021).

ເມືອງບຸນເໜືອ ແຂວງຜົ້ງສາລີ ມີທະບຽນວິສາຫະກິດທັງໝົດ 956 ທະບຽນ, ມີທຶນຈົດທະບຽນທັງໝົດ 1,078.93 ຕື້ກີບ, ທຽບໃສ່ແຜນການ 5 ປີປະຕິບັດລື່ນແຜນ 79 % (ແຜນການ 5 ປີ 602.75 ຕື້ກີບ); ໃນນີ້ຂັ້ນເມືອງອອກມີ 555 ທະບຽນ, ມີທຶນຈົດທະບຽນ 42.69 ຕື້ກີບ, ມີຫ້ວໜ່ວຍຈຸນລະວິສາຫະກິດ 654 ຫ້ວໜ່ວຍ, ມີທຶນຈົດທະບຽນ 24 ຕື້ກີບ, ວິສາຫະກິດຂະໜາດນ້ອຍ 184 ຫ້ວໜ່ວຍ, ມີທຶນຈົດທະບຽນ 100 ຕື້ກີບ, ວິສາຫະກິດຂະໜາດກາງ 74 ຫ້ວໜ່ວຍ, ມີທຶນຈົດທະບຽນ 175.12 ຕື້ກີບ, ວິສາຫະກິດຂະໜາດໃຫ່ຍ 64 ຫ້ວໜ່ວຍ, ມີທຶນຈົດທະບຽນ 779.45 ຕື້ກີບ; ໃນນີ້, ຂະແໜງບໍລິການມີ 308 ຫ້ວໜ່ວຍ, ການຄ້າມີ 436 ຫ້ວໜ່ວຍ ແລະ ການຜະລິດ 212 ຫ້ວໜ່ວຍ (Industrial and Commerce department, 2026). ສະພາບການເຂົ້າເຖິງແຫຼ່ງຂອງຜູ້ປະກອບການ ຈຸນລະວິສາຫະກິດ ໃນເຫດສະບານເມືອງບຸນເໜືອ ແຂວງຜົ້ງສາລີ ສະຖາບັນການເງິນຈຸລະພາກ ທີ່ບໍ່ຮັບເງິນຝາກ ສາມາດຊຸກຍູ້ສົ່ງເສີມບັນດາຫ້ວໜ່ວຍ ຈຸລະວິສາຫະກິດ ເຂົ້າເຖິງແຫຼ່ງທຶນ ຈຳນວນ 508 ຫ້ວໜ່ວຍ, ລວມມູນຄ່າ 23 ຕື້ກວ່າກີບ ໃນນີ້: ຂະແໜງຫັດຖະກຳ ມີ 62 ຫ້ວໜ່ວຍ, ວົງເງິນອະນຸມັດ 2,488.56 ລ້ານກີບ; ຂະແໜງກະສິກຳ ມີ 220 ຫ້ວໜ່ວຍ, ວົງເງິນອະນຸມັດ 11,614.59 ລ້ານກີບ; ຂະແໜງການຄ້າ ມີ 95 ຫ້ວໜ່ວຍ, ວົງເງິນອະນຸມັດ 3,560.03 ລ້ານກີບ; ຂະແໜງບໍລິການ ມີ 75 ຫ້ວໜ່ວຍ, ວົງເງິນອະນຸມັດ 1,784.79 ລ້ານກີບ; ຂະແໜງການອື່ນໆ ມີ 56 ຫ້ວໜ່ວຍ, ວົງເງິນອະນຸມັດ 3,949.10 ລ້ານກີບ (BoL, Northern Branch, 2025).

ຈຸນລະວິສາຫະກິດ ຖືໄດ້ວ່າເປັນຈຸລັງໜຶ່ງຂອງການຂັບເຄື່ອນການຜະລິດ, ການຄ້າ, ການບໍລິການໃນລະດັບຈຸລະພາກຂຶ້ນໄປ ພ້ອມດຽວກັນນັ້ນ ຈຸນລະວິສາຫະກິດຍັງເປັນອົງປະກອບສຳຄັນຕໍ່ການພັດທະນາເສດຖະກິດ ແລະ ສັງຄົມຂອງປະເທດ (Aga & Reilly, 2011). ໂດຍສະເພາະແມ່ນກຸ່ມທຸລະກິດສ່ວນໃຫຍ່ເປັນຄົນລາວເປັນຜູ້ປະກອບການຈຸນລະວິສາຫະກິດ ເຊິ່ງເປັນກົນໄກຫຼັກໃນການຂັບເຄື່ອນ ແລະ ສົ່ງເສີມການຂະຫຍາຍຕົວ ໃນລະບົບເສດຖະກິດ ແລະ ສັງຄົມ ໃຫ້ມີຄວາມໝັ້ນຄົງ ແລະ ເຂັ້ມແຂງທັ້ງເປັນເຄື່ອງມືທີ່ມີບົດບາດໃນການແກ້ໄຂບັນຫາຕ່າງໆ ຂອງປະເທດ ເຊັ່ນ: ການກະຕຸ້ນໃຫ້ລະບົບເສດຖະກິດໂດຍລວມເນື່ອງຈາກ ຈຸນລະວິສາຫະກິດ ເປັນທຸລະກິດທີ່ມີຄວາມຄ່ອງຕົວໃນການປັບສະພາບເຂົ້າເຖິງສະຖານະທົ່ວໄປລວມທັງຍັງໃຊ້ເງິນທຶນຕ່ຳກວ່າທຸລະກິດຂະໜາດໃຫຍ່, ການແກ້ໄຂບັນຫາຄວາມທຸກຍາກ ໂດຍການກະຈາຍລາຍໄດ້ໄປສູ່ຊົນນະບົດ ແລະ ຍັງຊ່ວຍຮອງຮັບແຮງງານຈາກພາກການກະເສດ-ກະສິກອນ ເມື່ອໝົດລະດູການຜະລິດ. ໃນຂະນະດຽວກັນ ສະຖາບັນການເງິນຈຸລະພາກ ໃນເມືອງບຸນເໜືອ ກໍ່ມີບົດບາດສຳຄັນໃນລະບົບເສດຖະກິດຂອງແຂວງຜົ້ງສາລີ ໃນການລະດົມເງິນຝາກ ແລະ ສະໜອງແຫຼ່ງເງິນທຶນໃຫ້ຜູ້ປະກອບການ ໂດຍການປ່ອຍສິນເຊື່ອຂອງສະຖາບັນການເງິນ ແມ່ນອີງໃສ່ນະໂຍບາຍສິນເຊື່ອ, ມາດຕະຖານເງື່ອນໄຂຂອງຜູ້ກູ້ ແລະ ຂໍ້ຈຳກັດຂອງການດຳເນີນທຸລະກິດ ເຊິ່ງເປັນອຸປະສັກໃນການເຂົ້າເຖິງແຫຼ່ງເງິນທຶນຂອງຜູ້ປະກອບການ ຈຸນລະວິສາຫະກິດ.

ເງິນທຶນຖືໄດ້ວ່າເປັນປັດໄຈຫຼັກທີ່ສົ່ງຜົນຕໍ່ການພັດທະນາທຸລະກິດໃຫ້ມີຄວາມເຂັ້ມແຂງ, ຍືນຍົງ ແລະ ຂັບເຄື່ອນທຸລະກິດໃຫ້ຂະຫຍາຍຕົວຕາມຈັງຫວະການຂະຫຍາຍຕົວທາງເສດຖະກິດ (Beck & Demirg-Kunt, 2006). ດັ່ງນັ້ນ, ແຫຼ່ງເງິນທຶນຈຶ່ງຖືວ່າເປັນປະເດັນທີ່ສຳຄັນຂອງຜູ້ປະກອບການວິສາຫະກິດໃນການສະໜັບສະໜູນການພັດທະນາທຸລະກິດ ແລະ ເສດຖະກິດຂອງປະເທດໃນໄລຍະຍາວ. ຢ່າງໃດກໍ່ຕາມ, ໃນອາດີດຜ່ານມາຜູ້ປະກອບການວິສາຫະກິດ ໂດຍສະເພາະຜູ້ປະກອບການ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ມັກຈະປະເຊີນກັບການດຳເນີນທຸລະກິດຂອງຕົນ ເນື່ອງຈາກຕົ້ນທຶນໃນການໃຊ້ຈ່າຍເບື້ອງຕົ້ນສູງ ແຕ່ໂອກາດການເຂົ້າເຖິງແຫຼ່ງເງິນທຶນທີ່ເໝາະສົມມີຄວາມຫຍຸ້ງຍາກ ເຊິ່ງເຮັດໃຫ້ການພັດທະນາວິສາຫະກິດບໍ່ ເຕີບໃຫຍ່ຂະຫຍາຍຕົວເທົ່າທີ່ຄວນ (Industrial and Commerce department, 2026). ຈາກເຫດຜົນ ແລະ ຄວາມສຳຄັນຂອງບັນຫາດັ່ງກ່າວ ສາມາດເຫັນໄດ້ວ່າ “ປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງຜູ້ປະກອບການ MSMEs ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ” ຈຶ່ງມີຄວາມຈຳເປັນຢ່າງຍິ່ງ ເພື່ອໃຫ້ໄດ້ຂໍ້ມູນທີ່ແທ້ຈິງ ໃຊ້ເປັນພື້ນຖານໃນການກຳນົດນະໂຍບາຍ, ແຜນງານ, ການດຳເນີນວິສາຫະກິດ, ການຂະຫຍາຍຕົຂອງວິສາຫະກິດ ແລະ ການເຂົ້າເຖິງແຫຼ່ງທຶນຂອງວິສາຫະກິດໃຫ້ມີປະສິດທິຜົນ ແລະ ຍືນຍົງຕໍ່ໄປ. ດັ່ງນັ້ນ, ເພື່ອເປັນການເຮັດໃຫ້ການດຳເນີນການຄົ້ນຄວ້າວິໄຈໃນຄັ້ງນີ້ ເປັນໄປຕາມເປົ້າໝາຍ ແລະ ສະດວກຕໍ່ການຄົ້ນຄວ້າວິໄຈ ດັ່ງນັ້ນ, ຜູ້ວິໄຈໄດ້ກຳນົດຈຸດປະສົງຂອງການຄົ້ນຄວ້າວິໄຈຄື:

1) ເພື່ອສຶກສາສະພາບການດຳເນີນທຸລະກິດ ແລະ ສະພາບການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງຜູ້ປະກອບການ ຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ.

2) ເພື່ອສຶກສາລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງ ຜູ້ປະກອບການຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ.

2. ອຸປະກອນ ແລະ ວິທີການ

2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ເຂົ້າໃນການສຶກສາຄືຜູ້ປະກອບການ ຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ຈຳນວນ 654 ຫົວໜ່ວຍ ເປັນເປົ້າໝາຍກຸ່ມປະຊາກອນ (Office of industrial and commerce Boon Nua District, 2026), ໂດຍກຸ່ມຕົວຢ່າງທີ່ຈະໃຊ້ເຂົ້າໃນການສຶກສາຄື ຜູ້ປະກອບການ ຈຸນລະວິສາຫະກິດ ໃນເມືອງບຸນເໜືອ ແຂວງຜົ້ງສາລີ ໂດຍການສຸ່ມຂະໜາດກຸ່ມຕົວຢ່າງເພື່ອມາສຶກສານີ້ ແມ່ນໄດ້ມາຈາກການນຳໃຊ້ສູດຄິດໄລ່ກຸ່ມຕົວຢ່າງທີ່ຮູ້ຈຳນວນປະຊາກອນທີ່ແນ່ນອນ ຂອງ ທ່ານ Taro Yamane (Yamane, 1967) ດັ່ງນີ້:

$$n = \frac{N}{1 + N(e)^2}$$

e = ຄ່າຄວາມຄາດເຄື່ອນຂອງຂະໜາດປະຊາກອນ (ກຳນົດ 5% ຫຼື 0.05)

ແທນຕາມສູດ:

$$n = \frac{654}{1+654(0.05)^2} = \frac{654}{2.635} = 248.19 \approx 249$$

ດັ່ງນັ້ນ ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ ແມ່ນຜູ້ປະກອບການ ຈຸນລະວິສາຫະກິດ ໃນເມືອງບຸນເໜືອ ແຂວງຜົ້ງສາລີ ຈຳນວນ 249 ຫົວໜ່ວຍ (ຜູ້ປະກອບການທຸລະກິດ MSMEs 1 ຄົນ/1 ຫົວໜ່ວຍ).

2.2 ເຄື່ອງມືທີ່ໃຊ້ໃນການວິໄຈ

ການສຶກສານີ້ໄດ້ນຳໃຊ້ວິທີການສຶກສາ ແບບປະລິມານ ໂດຍນຳໃຊ້ແບບສອບຖາມທີ່ມີລັກສະນະປາຍປິດ ແລະ ປາຍເປີດ ເຊິ່ງແບ່ງອອກເປັນ 3 ສ່ວນຄື: ຂໍ້ມູນທົ່ວໄປຂອງຜູ້ປະກອບການ MSMEs, ສະພາບທົ່ວໄປຂອງການດຳເນີນທຸລະກິດ MSMEs, ສະພາບການເຂົ້າເຖິງແຫຼ່ງທຶນສະຖາບັນການເງິນຈຸນລະພາກ (ການຂໍກູ້ຢືມເງິນ) ຂອງຜູ້ປະກອບການ, ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງແຫຼ່ງທຶນຂອງຜູ້ປະກອບການ MSMEs ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ແມ່ນໄດ້ກຳນົດເປັນຄ່າລະດັບ (Likert scale) ແລະ ມີເກນການວັດແທກຄ່າຄະແນນປະເມີນ, ຊ່ວງຄ່າຄະແນນສະເລ່ຍ ແລະ ຄວາມໝາຍຊ່ວງຄະແນນສະເລ່ຍ ດັ່ງນີ້:

ຄະແນນປະເມີນ	ຊ່ວງຄ່າຄະແນນສະເລ່ຍ	ຄວາມໝາຍຊ່ວງຄະແນນສະເລ່ຍ
5	4.21 ຫາ 5.00	ຫຼາຍທີ່ສຸດ
4	3.41 ຫາ 4.20	ຫຼາຍ
3	2.61 ຫາ 3.40	ປານກາງ
2	1.81 ຫາ 2.60	ໜ້ອຍ
1	1.00 ຫາ 1.80	ໜ້ອຍທີ່ສຸດ

ໂດຍການສ້າງແບບສອບຖາມແມ່ນນຳໃຊ້ທິດສະດີການເຂົ້າເຖິງການໃຊ້ບໍລິການທາງການເງິນ, ແນວຄິດການສົ່ງເສີມການເຂົ້າເຖິງທາງການເງິນ (Woldehanna, 2018)., ຫຼັກການໃນການພິຈາລະນາການໃຫ້ສິນເຊື່ອຕາມຫຼັກການ 6C's, ບົດຄົ້ນຄວ້າຂອງ Bangika et al (Bangika et al, 2026) ແລະ ບົດຄົ້ນຄວ້າຂອງ Meressa (Meressa, 2022) ມາເປັນແບບຢ່າງອ້າງອີງ ພາຍຫຼັງສຳເລັດແລ້ວໄດ້ນຳແບບສອບຖາມໄປຜ່ານຜູ້ຊ່ຽວຊານຈຳນວນ 3 ທ່ານ ເພື່ອຫາຄ່າດັດສະນີຄວາມສອດຄ່ອງລະຫວ່າງເນື້ອໃນຄຳຖາມ ກັບຈຸດປະສົງ (Index of Item-Objective Congress ຫຼື IOC) ຂອງທຸກຄຳຖາມໃນແບບສອບຖາມໄດ້ຄ່າສະເລ່ຍ ຢູ່ໃນລະຫວ່າງ 0.66-1.00 ເຊິ່ງໃຫຍ່ກວ່າ 0.50. ແລະ ຜ່ານການທົດສອບຄວາມເຊື່ອໝັ້ນຂອງແບບສອບຖາມດ້ວຍການນຳເອົາແບບສອບຖາມໄປທົດລອງ (Try out) ໃນກຸ່ມຕົວຢ່າງຜູ້ປະກອບການຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ຈຳນວນ 40 ສະບັບ ຫຼັງຈາກນັ້ນຈຶ່ງເອົາແບບສອບຖາມມາປ້ອນຂໍ້ມູນ ຫຼັງຈາກປ້ອນຂໍ້ມູນສຳເລັດຈຶ່ງໄດ້ດຳເນີນການທົດສອບຄວາມເຊື່ອໝັ້ນຂອງແບບສອບຖາມດ້ວຍ ວິທີຂອງ Cronbach's Alpha ໃຫ້ໄດ້ 80% ແລະ ການທົດສອບຄວາມເຊື່ອໝັ້ນຂອງແບບສອບຖາມດ້ວຍການຫາຄ່າສຳປະສິດ Cronbach's Alpha ມີຄ່າເທົ່າກັບ 0.885 ຫຼື 88.5% ເຊິ່ງສູງກວ່າເກນມາດຕະຖານທີ່ກຳນົດໄວ້ຄື 80% ສະແດງວ່າເນື້ອໃນແບບສອບຖາມມີຄວາມເຊື່ອໝັ້ນ ແລະ ສາມາດນຳໄປໃຊ້ເປັນເຄື່ອງມືໃນການລົງເກັບຂໍ້ມູນໃນຂັ້ນຕໍ່ໄປໄດ້.

2.3 ວິທີການເກັບກຳຂໍ້ມູນ

ໃນການເກັບກຳ ແລະ ລວບລວມຂໍ້ມູນ ຜູ້ວິໄຈໄດ້ມີການລົງເກັບກຳຂໍ້ມູນຕົວຈິງຈາກຜູ້ປະກອບການຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ໂດຍສະເພາະແມ່ນຂໍ້ມູນກ່ຽວກັບລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງຜູ້ປະກອບການ MSMEs ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ.ໂດຍໃຊ້ໄລຍະເວລາ 2 ເດືອນ ຄື: ເລີ່ມແຕ່ເດືອນ ກໍລະກົດ ຫາ ເດືອນສິງຫາ ປີ 2026 ດ້ວຍການນຳແບບສອບຖາມລົງໄປແຈກຢາຍໃຫ້ກັບຜູ້ປະກອບການທີ່ຍື່ນຄຳຮ້ອງຂໍສິນເຊື່ອນຳ ສະຖາ

ບັນການເງິນຈຸລະພາກ ທີ່ເປັນກຸ່ມຕົວຢ່າງເປົ້າໝາຍ ຈຳນວນ 249 ສະບັບ ແລະ ເກັບຄືນໄດ້ທັງໝົດ 249 ສະບັບ (ສິມບຸນ); ພ້ອມທັງໄດ້ອະທິບາຍລາຍລະອຽດກ່ຽວກັບແຕ່ລະຂໍ້ຄຳຖາມໃນແບບສອບຖາມເພື່ອໃຫ້ຜູ້ຕອບແບບສອບຖາມມີຄວາມເຂົ້າໃຈ ແລະ ໃຫ້ຂໍ້ມູນໄດ້ຖືກຕ້ອງຕາມຈຸດປະສົງທີ່ຕ້ອງການ ແລະ ເກັບແບບສອບຖາມຄືນພ້ອມພາຍຫຼັງສຳເລັດ.

2.4 ການວິເຄາະຂໍ້ມູນ

ພາຍຫຼັງຜູ້ວິໄຈຈະເກັບລວບລວມຂໍ້ມູນ ຈາກຜູ້ປະກອບການວິສາຫະກິດ ຜ່ານແບບສອບຖາມທັງໝົດຕາມຈຳນວນ ສຳເລັດແລ້ວ, ຂັ້ນຕອນຕໍ່ມາຜູ້ວິໄຈໄດ້ກວດສອບຄວາມຖືກຕ້ອງ ຂອງແບບສອບຖາມແຕ່ລະຊຸດ. ຈາກນັ້ນ, ເອົາຂໍ້ມູນທັງໝົດໄປວິເຄາະໂດຍໂປຣແກຣມສຳເລັດຮູບທາງສະຖິຕິ ແລະ ແຕ່ລະຈຸດປະສົງຈະໄດ້ນຳໃຊ້ສະຖິຕິວິເຄາະ ດັ່ງນີ້: ສຳລັບການສຶກສາສະພາບການດຳເນີນທຸລະກິດ ແລະ ສະພາບການເຂົ້າເຖິງແຫຼ່ງທຶນສະຖາບັນການເງິນຈຸລະພາກ ຂອງຜູ້ປະກອບການ ຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ. ປັດໂດຍສະເພາະແມ່ນປັດໄຈດ້ານບຸກຄົນ, ສະພາບທົ່ວໄປຂອງການດຳເນີນທຸລະກິດ, ສະພາບການເຂົ້າເຖິງແຫຼ່ງເງິນທຶນ (ການຂໍກູ້ຢືມເງິນ) ເປັນການວິເຄາະແບບປະລິມານ ດ້ວຍສະຖິຕິພັນລະນາ ປະກອບມີຄ່າຄວາມຖີ່, ຄ່າສ່ວນຮ້ອຍ. ສຳລັບການວິເຄາະລະດັບຄວາມສຳຄັນປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງແຫຼ່ງທຶນຂອງຜູ້ປະກອບການ ຈຸນລະວິສາຫະກິດ ໃນເມືອງບຸນເໜືອ ແຂວງຜົ້ງສາລີ ເປັນການວິເຄາະແບບປະລິມານ ດ້ວຍສະຖິຕິພັນລະນາ ທີ່ປະກອບດ້ວຍ ຄ່າສະເລ່ຍ ແລະ ຄ່າພັນປຽນມາດຕະຖານ.

3. ຜົນໄດ້ຮັບ

3.1 ສະພາບການດຳເນີນທຸລະກິດ ແລະ ການເຂົ້າເຖິງແຫຼ່ງເງິນທຶນ ສະຖາບັນການເງິນຈຸລະພາກ ຂອງຜູ້ປະກອບການ ຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ.

ສະພາບການດຳເນີນທຸລະກິດຂອງຜູ້ປະກອບການຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ທີ່ຕອບແບບສອບຖາມ ຈຳນວນ 249 ຄົນ ພົບວ່າ ຜູ້ປະກອບການສ່ວນຫຼາຍເປັນເພດຊາຍ (ຈຳນວນ 225 ຄົນ ກວມເອົາ 90%) ທີ່ມີອາຍຸລະຫວ່າງ ອາຍຸ 41ປີ ຫາ 45 ປີ (ຈຳນວນ 190 ຄົນ ກວມເອົາ 76%) ແລະ ສະຖານະພາບແຕ່ງງານແລ້ວ (ຈຳນວນ 239 ຄົນ ກວມເອົາ 96%) ໂດຍມີລະດັບການສຶກສາມັນ (ຈຳນວນ 105 ຄົນ ກວມເອົາ 42%) ແລະ ເປັນເຊື້ອຊາດລາວ (ຈຳນວນ 199 ຄົນ ກວມເອົາ 80%). ສ່ວນຮູບແບບການດຳເນີນທຸລະກິດຜູ້ປະກອບການ ຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ທີ່ຕອບແບບສອບຖາມ ຈຳນວນ 249 ຄົນ ສ່ວນຫຼາຍມີຮູບແບບກຳມະສິດເປັນວິສາຫະກິດສ່ວນບຸກຄົນ 100% ໃນນີ້ ເປັນ ວິສາຫະກິດ ທີ່ນອນຢູ່ໃນ ຂະແໜງການຄ້າ (ຈຳນວນ 159 ຄົນ ກວມເອົາ 64%), ເປັນວິສາຫະກິດ ທີ່ນອນຢູ່ໃນ ຂະ ແໜງການຜະລິດ (ຈຳນວນ 50 ຄົນ ກວມເອົາ 20%) ແລະ ເປັນວິສາຫະກິດທີ່ນອນຢູ່ໃນຂະແໜງການບໍລິການ (ຈຳນວນ 40 ຄົນ ກວມເອົາ 16%). ສ່ວນແຫຼ່ງເງິນທຶນເລີ່ມຕົ້ນໃນການດຳເນີນທຸລະກິດ ແມ່ນທຶນຕົນເອງ (ຈຳນວນ 174 ຄົນ ກວມເອົາ 70%) ແລະ ແຫຼ່ງເງິນທຶນໝຸນວຽນໃນການດຳເນີນທຸລະກິດ ແມ່ນມາຈາກການກູ້ຢືມ ຈາກສະຖາບັນການເງິນຈຸລະພາກ (ຈຳນວນ 75 ຄົນ ກວມເອົາ 30%). ໄລຍະເວລາໃນການດຳເນີນທຸລະກິດ ແມ່ນ 6 ປີ-10 ປີ (ຈຳນວນ 139 ຄົນ ກວມເອົາ 56%) ແລະ ຈຸດປະສົງໃນການດຳເນີນທຸລະກິດແມ່ນຄວາມມັກສ່ວນຕົວ (ຈຳນວນ 120 ຄົນ ກວມເອົາ 48%), ຮອງລົງມາຄວາມຕ້ອງການຕະຫຼາດສູງ (ຈຳນວນ 65 ຄົນ ກວມເອົາ 26%), ແຮງຈູງໃຈດ້ານເສດຖະກິດ (ຈຳນວນ 35 ຄົນ ກວມເອົາ 14%), ແຮງຈູງໃຈສະຖານທີ່ ແລະ ເສັ້ນທາງຄົມມະນາຄົມ (ຈຳນວນ 30 ຄົນ ກວມເອົາ 12%) ເປັນຕົ້ນ.

ສຳລັບການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງຜູ້ປະກອບການ ຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ຈາກການແຈກຢາຍແບບສອບຖາມຈຳນວນ 249 ສະບັບ ພົບວ່າ ມີຜູ້ປະກອບການຍື່ນຄຳຮ້ອງຂໍສິນເຊື່ອ ສະຖາບັນການເງິນຈຸລະພາກ ຈຳນວນ 194 ຄົນ (ມີ 55 ຄົນບໍ່ໄດ້ຍື່ນຄຳຮ້ອງຂໍສິນເຊື່ອ) ເຊິ່ງຜູ້ປະກອບການຈຸນລະວິສາຫະກິດ ສາມາດເຂົ້າເຖິງແຫຼ່ງເງິນທຶນ (ໄດ້ຮັບການອະນຸມັດ) ກວມເອົາ 39% ແລະ ບໍ່ສາມາດເຂົ້າເຖິງແຫຼ່ງເງິນທຶນ (ບໍ່ໄດ້ຮັບການອະນຸມັດ) ກວມເອົາ 61% ໂດຍມີສາຍເຫດມາຈາກຜູ້ປະກອບການບໍ່ໄດ້ຖືບັນຊີຕາມລະບຽບບັນຊີວິສາຫະກິດ, ບໍ່ມີແຜນທຸລະກິດທີ່ຊັດເຈນ ແລະ ບໍ່ມີຫຼັກຊັບຄ້ຳປະກັນທີ່ພຽງພໍ. ໂດຍຈຸດປະສົງໃນການເຂົ້າຫາແຫຼ່ງເງິນທຶນ ເພື່ອເປັນເງິນທຶນໝຸນວຽນໃນທຸລະກິດ ກວມເອົາ 58.46%, ມີໄລຍະເວລາອະນຸມັດເງິນ ພາຍ 15 ວັນ ກວມເອົາ 78.46%, ໃຊ້ໃບຕາດິນຖາວອນ ເປັນຫຼັກຊັບຄ້ຳປະກັນທີ່ໃຊ້ໃນການເຂົ້າຫາແຫຼ່ງທຶນ ກວມເອົາ 93.08%, ໄດ້ສະໜອງເອກະສານການກູ້ຢືມແບບຟອມເງິນກູ້ ກວມເອົາ 91.54%.

3.2 ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງ ຜູ້ປະກອບການຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ.

ຈາກຜົນການທົດສອບ ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງ ຜູ້ປະກອບການຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ພົບວ່າ:

ຕາຕະລາງ 1 ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງ ຜູ້ປະກອບການ.

ລ/ດ	ປັດໄຈໂດຍລວມໃນການເຂົ້າເຖິງແຫ່ງທຶນ	ຈຳນວນ	$\overline{X}$	$S.D$	ລະດັບຄວາມສຳຄັນ
1	ສະພາບທາງເສດຖະກິດ (Condition)	249	2.90	1.13	ປານກາງ
2	ການຄວບຄຸມ ແລະ ການຜ່ອນຜັນ (Control & Compliance)	249	4.59	0.55	ຫຼາຍທີ່ສຸດ
3	ເງິນທຶນ (Capital)	249	4.70	0.54	ຫຼາຍທີ່ສຸດ
4	ຫຼັກຊັບຄ້ຳປະກັນ (Collateral)	249	4.71	0.52	ຫຼາຍທີ່ສຸດ
5	ຄຸນສົມບັດຂອງຜູ້ປະກອບການ (Character)	249	4.50	0.69	ຫຼາຍທີ່ສຸດ
6	ຄວາມສາມາດໃນການສ້າງລາຍໄດ້ (Capacity)	249	4.70	0.55	ຫຼາຍທີ່ສຸດ
7	ຕົ້ນທຶນເງິນກູ້	249	4.61	0.65	ຫຼາຍທີ່ສຸດ
8	ປັດໄຈດ້ານທຸລະກິດ	249	4.37	0.87	ຫຼາຍທີ່ສຸດ
9	ປັດໄຈດ້ານຂະບວນການ	249	4.31	0.91	ຫຼາຍທີ່ສຸດ
	ລວມ	249	4.37	0.48	ຫຼາຍທີ່ສຸດ

ແຫຼ່ງຂໍ້ມູນ: ຈາກການເກັບກຳຂໍ້ມູນຕົວຈິງນຳຜູ້ປະກອບການຈຸນລະວິສາຫະກິດໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ແລະ ຄຳນວນຜ່ານໂປຣແກຣມສຳເລັດຮູບທາງສະຖິຕິ.

ລະດັບຄວາມສຳຄັນຂອງປັດໄຈ ທີ່ສາມາດເຂົ້າເຖິງແຫຼ່ງເງິນທຶນ ສະຖາບັນການເງິນຈຸລະພາກ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ໂດຍລວມ ຜູ້ປະກອບການ ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍທີ່ສຸດ ດ້ວຍຄ່າສະເລ່ຍເທົ່າກັບ 4.37 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.48 ໂດຍການຈັດອັນດັບລະດັບຄ່າສະເລ່ຍແຕ່ໃຫຍ່ໄປຫານ້ອຍ ເກີດມາຈາກປັດໄຈຫຼັກຊັບຄ້ຳປະກັນ (Collateral) ຜູ້ປະກອບການໄດ້ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍທີ່ສຸດ ດ້ວຍຄ່າສະເລ່ຍ 4.71 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.52, ຮອງລົງມາ ຜູ້ປະກອບການຕ່າງກໍ່ໃຫ້ຄວາມສຳຄັນ ປັດໄຈທາງດ້ານເງິນທຶນ (Capital) ແລະ ຄວາມສາມາດໃນການສ້າງລາຍໄດ້ (Capacity) ຢູ່ໃນລະດັບຫຼາຍທີ່ສຸດ ດ້ວຍຄ່າສະເລ່ຍເທົ່າກັບ 4.70 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.54 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.55 ຕາມລຳດັບ, ຖັດມາຜູ້ປະກອບການໄດ້ໃຫ້ຄວາມສຳຄັນຕໍ່ກັບປັດໄຈດ້ານຕົ້ນທຶນເງິນກູ້ ຢູ່ໃນລະດັບຫຼາຍທີ່ສຸດ ດ້ວຍຄ່າສະເລ່ຍເທົ່າກັບ 4.61 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.65, ຕໍ່ມາຜູ້ປະກອບການໄດ້ໃຫ້ຄວາມສຳຄັນຕໍ່ກັບປັດໄຈດ້ານການຄວບຄຸມ ແລະ ການຜ່ອນຜັນ (Control & Compliance) ຢູ່ໃນລະດັບຫຼາຍທີ່ສຸດ ດ້ວຍຄ່າສະເລ່ຍເທົ່າກັບ 4.59 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.55, ຮອງລົງມາຜູ້ປະກອບການຍັງໄດ້ໃຫ້ຄວາມສຳຄັນປັດໄຈທາງດ້ານຄຸນສົມບັດຂອງຜູ້ປະກອບການ (Character) ຢູ່ໃນລະດັບຫຼາຍທີ່ສຸດ ດ້ວຍຄ່າສະເລ່ຍເທົ່າກັບ 4.50 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.69, ຮອງລົງມາຜູ້ປະກອບການຍັງໄດ້ໃຫ້ຄວາມສຳຄັນຕໍ່ກັບປັດໄຈດ້ານທຸລະກິດ ຢູ່ໃນລະດັບຫຼາຍທີ່ສຸດ ດ້ວຍຄ່າສະເລ່ຍເທົ່າກັບ 4.37 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.87, ຮອງລົງມາຜູ້ປະກອບການຍັງໄດ້ໃຫ້ຄວາມສຳຄັນຕໍ່ກັບປັດໄຈດ້ານຂະບວນການ ຢູ່ໃນລະດັບຫຼາຍທີ່ສຸດ ດ້ວຍຄ່າສະເລ່ຍເທົ່າກັບ 4.31 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.91, ແລະ ສຸດທ້າຍຜູ້ປະກອບການໄດ້ໃຫ້ຄວາມສຳຄັນຕໍ່ກັບປັດໄຈດ້ານສະພາບທາງເສດຖະກິດ (Condition) ຢູ່ໃນລະດັບປານກາງ ດ້ວຍຄ່າສະເລ່ຍເທົ່າກັບ 2.90 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 1.13.

4. ວິພາກຜົນ

4.1 ສະພາບການດຳເນີນທຸລະກິດ ແລະ ສະພາບການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງຜູ້ປະກອບການ ຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ

ຈາກຜົນການສຶກສາສະພາບການດຳເນີນທຸລະກິດ ແລະ ສະພາບການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງຜູ້ປະກອບການ ຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ພົບວ່າ ສະພາບການດຳເນີນທຸລະກິດຂອງຜູ້ປະກອບການຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ພົບວ່າ ຜູ້ປະກອບການສ່ວນຫຼາຍເປັນເພດຊາຍ ມີອາຍຸລະຫວ່າງ ອາຍຸ 41 ປີ ຫາ 45 ປີ ແລະ ສະຖານະພາບແຕ່ງງານແລ້ວ, ມີລະດັບການສຶກສາມັນ ແລະ ເປັນເຊື້ອຊາດລາວ. ສ່ວນຮູບແບບການດຳເນີນທຸລະກິດຜູ້ປະກອບການ ຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ສ່ວນຫຼາຍມີຮູບແບບກຳມະສິດເປັນວິສາຫະກິດສ່ວນບຸກຄົນ ໃນນີ້ ເປັນ ວິສາຫະກິດ ທີ່ນອນຢູ່ໃນ ຂະແໜງການຄ້າ, ຂະແໜງ ການຜະລິດ ແລະ ຂະແໜງການ ບໍລິການ. ສ່ວນແຫຼ່ງເງິນທຶນເລີ່ມຕົ້ນໃນການດຳເນີນທຸລະກິດ ແມ່ນ ທຶນຕົນເອງ ແລະ ແຫຼ່ງເງິນທຶນໝຸນວຽນໃນການດຳເນີນທຸລະກິດ ແມ່ນມາຈາກການກູ້ຢືມ ຈາກສະຖາບັນການເງິນຈຸລະພາກ. ໄລຍະເວລາໃນການດຳເນີນທຸລະກິດ ແມ່ນ 5 ປີ-10 ປີ ແລະ ຈຸດປະສົງໃນການດຳເນີນທຸລະກິດແມ່ນຄວາມມັກສ່ວນຕົວ, ຮອງລົງມາຄວາມຕ້ອງການຕະຫຼາດ, ແຮງຈູງໃຈດ້ານເສດຖະກິດ, ແຮງຈູງໃຈດ້ານ

ສະຖານທີ່ ແລະ ເສັ້ນທາງຄົມມະນາຄົມ ເປັນຕົ້ນ. ເຊິ່ງມີຄວາມສອດຄ່ອງກັບບົດຄົ້ນຄວ້າຂອງ Louanglat (2017) ທີ່ໄດ້ສຶກສາປັດໄຈທີ່ມີຜົນຕໍ່ການເຂົ້າຫາແຫຼ່ງເງິນທຶນຂອງຜູ້ປະກອບການ ໃນເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ທີ່ຊີ້ວ່າໃຫ້ເຫັນວ່າ ໃນດ້ານເພດ, ສະຖານະພາບ, ເຊື້ອຊາດ, ຮູບແບບກຳມະສິດ ແລະ ຮູບແບບການລົງທຶນ ໃນຂະແໜງການຄ້າ ປະເພດເຄື່ອງຂາຍຍ່ອຍ ໂດຍເປັນວິສາຫະກິດຂະໜາດນ້ອຍ ໃຊ້ທຶນຕົນເອງແຫຼ່ງເງິນທຶນເລີ່ມຕົ້ນທຸລະກິດ ແລະ ໃຊ້ເງິນທຶນກູ້ຢືມຈາກທະນາຄານທຸລກິດ ເປັນທຶນໝຸນວຽນໃນການດຳເນີນທຸລະກິດ ໂດຍດຳເນີນທຸລະກິດມາແລ້ວ 6-10 ປີ. ສ່ວນສະພາບການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງຜູ້ປະກອບການ ຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ຈາກການແຈກຢາຍແບບສອບຖາມຕົວຈິງ ພົບວ່າ ມີຜູ້ປະກອບການຍື່ນຄຳຮ້ອງຂໍສິນເຊື່ອນຳສະຖາບັນການເງິນຈຸລະພາກ ຈຳນວນ 39 ຄົນ, ເຊິ່ງຜູ້ປະກອບການຈຸນລະວິສາຫະກິດ ສາມາດເຂົ້າເຖິງແຫຼ່ງເງິນທຶນ (ໄດ້ຮັບການອະນຸມັດ) ກວມເອົາ 39% ແລະ ບໍ່ສາມາດເຂົ້າເຖິງແຫຼ່ງເງິນທຶນ (ບໍ່ໄດ້ຮັບການອະນຸມັດ) ກວມເອົາ 61% ໂດຍມີສາຍເຫດມາຈາກຜູ້ປະກອບການບໍ່ໄດ້ຖືບັນຊີຕາມລະບຽບບັນຊີວິສາຫະກິດ, ບໍ່ມີແຜນທຸລະກິດທີ່ຊັດເຈນ ແລະ ບໍ່ມີຫຼັກຊັບຄ້ຳປະກັນທີ່ພຽງພໍ, ເຊິ່ງຈຸດປະສົງໃນການເຂົ້າຫາແຫຼ່ງເງິນທຶນ ແມ່ນເພື່ອເປັນເງິນທຶນໝຸນວຽນໃນທຸລະກິດ, ມີໄລຍະເວລາອະນຸມັດເງິນ ພາຍ 15 ວັນ, ສ່ວນຫຼາຍແມ່ນໃຊ້ໃບຕາດິນຖາວອນ ເປັນຫຼັກຊັບຄ້ຳປະກັນທີ່ໃຊ້ໃນການເຂົ້າຫາແຫຼ່ງທຶນ. ເຊິ່ງສອດຄ່ອງກັບການຄົ້ນວ້າ ຂອງ Charles & Lianfen (2021) ໄດ້ສຶກສາປັດໄຈກຳນົດການເຂົ້າເຖິງສິນເຊື່ອຈາກທະນາຄານທຸລະກິດສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ໃນປະເທດທານຊາເນຍ ເຊິ່ງການສະແຫວງຫາເງິນທຶນ ແລະ ບັນຫາໃນການສະແຫວງຫາເງິນທຶນຂອງຜູ້ປະກອບການທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃນທານຊາເນຍ ທີ່ວ່າໃນດ້ານແຫຼ່ງເງິນທຶນມາແມ່ນເງິນກູ້ຈາກສະຖາບັນການເງິນ, ໄດ້ຍື່ນຄຳຮ້ອງຂໍກູ້ເງິນຈາກທະນາຄານທຸລະກິດເຊິ່ງໄດ້ຮັບອະນຸມັດພຽງ 45%, ວັດຖຸປະສົງໃນການກູ້ຢືມເປັນທຶນໝຸນວຽນ ແລະ ວົງເງິນອະນຸມັດຂ້ອນຂ້າງຕ່ຳ.

4.2 ວິພາກຜົນ ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງ ຜູ້ປະກອບການຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ.

ຈາກການວິເຄາະ ລະດັບຄວາມສຳຄັນຂອງປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງ ຜູ້ປະກອບການຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ໃນຄັ້ງນີ້ພົບວ່າ ປັດໄຈຫຼັກຊັບຄ້ຳປະກັນ (Collateral), ປັດໄຈທາງດ້ານເງິນທຶນ (Capital), ປັດໄຈດ້ານຄວາມສາມາດໃນການສ້າງລາຍໄດ້ (Capacity), ປັດໄຈດ້ານຕົ້ນທຶນເງິນກູ້, ປັດໄຈດ້ານການຄວບຄຸມ ແລະ ການຜ່ອນຜັນ (Control & Compliance), ປັດໄຈທາງດ້ານຄຸນສົມບັດຂອງຜູ້ປະກອບການ (Character), ປັດໄຈດ້ານທຸລະກິດ, ປັດໄຈດ້ານຂະບວນການ ຕ່າງກໍ່ມີຄວາມສຳຄັນຢູ່ໃນລະດັບຫຼາຍທີ່ສຸດຕາມລຳດັບ, ສ່ວນປັດໄຈດ້ານສະພາບທາງເສດຖະກິດ (Condition) ແມ່ນມີຄວາມສຳຄັນຢູ່ ໃນລະດັບປານກາງ ເນື່ອງຈາກໃນການພິຈາລະນາປ່ອຍສິນເຊື່ອ ສະຖາບັນການເງິນຈຸລະພາກມັກພິຈາລະນາລາຍຮັບ, ກະແສເງິນສົດ, ປະຫວັດການຊຳລະໜີ້ ແລະ ຄວາມສາມາດໃນການຊຳລະໜີ້ຂອງຜູ້ກູ້ຢືມເປັນສຳຄັນ. ດັ່ງນັ້ນ ເຖິງວ່າສະພາບເສດຖະກິດໂດຍລວມຈະບໍ່ດີ ແຕ່ຖ້າວິສາຫະກິດມີລາຍຮັບສະໝ່ຳສະເໝີ ແລະ ມີກະແສເງິນສົດທີ່ພຽງພໍ ກໍຍັງມີໂອກາດເຂົ້າເຖິງແຫຼ່ງທຶນໄດ້ ສະນັ້ນ, ຈຶ່ງເຮັດໃຫ້ປັດໄຈດ້ານສະພາບທາງເສດຖະກິດ (Condition) ແມ່ນມີຄວາມສຳຄັນຢູ່ໃນລະດັບປານກາງ, ເຊິ່ງສອດຄ່ອງກັບການຄົ້ນຄວ້າ ຂອງ Sengdala & Her (2022)ໄດ້ສຶກສາປັດໄຈທີ່ມີຜົນຕໍ່ການເຂົ້າຫາແຫຼ່ງເງິນທຶນຂອງຜູ້ປະກອບການ ໃນເມືອງໄຊຍະບຸລີ ແຂວງໄຊຍະບຸລີ ໃນທຸກດ້ານ ໂດຍສະເພາະແມ່ນປັດໄຈດ້ານຫຼັກຊັບຄ້ຳປະກັນ ແລະ ປັດໄຈທາງດ້ານຄຸນສົມບັດຂອງຜູ້ປະກອບການ ເປັນຫຼັກ, ນອກຈາກນີ້ຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ Sommer (2022) ທີ່ຄົ້ນຄວ້າກ່ຽວກັບ ປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງສິນເຊື່ອຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເຫັນໄດ້ວ່າ ປັດໄຈດ້ານການຄວບຄຸມ ແລະ ການຜ່ອນຜັນ (Control & Compliance) ເປັນປັດໄຈທີ່ບໍ່ໄດ້ຄາດຄິດຈາກການເງິນຈຸນລະພາກ. ແຕ່ຜົນການຄົ້ນຄວ້າຄັ້ງນີ້ຜັດມີຄວາມຄັດແຍ້ງກັບຜົນການຄົ້ນຄວ້າ ຂອງ Khattighalath et al. (2020) ໄດ້ສຶກສາ ປັດໄຈທີ່ມີຄວາມສຳພັນຕໍ່ການເຂົ້າຫາແຫຼ່ງທຶນຂອງຜູ້ປະກອບການທຸລະກິດທີ່ຜັກແຮມໃນນະຄອນຫຼວງພະບາງ ເຊິ່ງເຫັນໄດ້ວ່າລະດັບຄວາມສຳຄັນຂອງປັດໄຈດ້ານຕົ້ນທຶນເງິນກູ້ ແລະ ປັດໄຈການຄວບຄຸມ ແລະ ການຜ່ອນຜັນ ຢູ່ໃນລະດັບປານກາງ ໃນການເຂົ້າຫາແຫຼ່ງເງິນທຶນ ຍົກເວັ້ນລະດັບລັກສະນະຂອງຜູ້ປະກອບການ ໃຫ້ລະດັບຄວາມສຳຄັນຫຼາຍໃນການເຂົ້າຫາແຫຼ່ງເງິນທຶນ.

5. ສະຫຼຸບຜົນ

ຈາກຜົນການສຶກສາ ຜົນໄດ້ຮັບຈາກການສຶກສາ ສະພາບການດຳເນີນທຸລະກິດຂອງຜູ້ປະກອບການຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ພົບວ່າ ຜູ້ປະກອບການສ່ວນຫຼາຍເປັນເພດຊາຍ ມີອາຍຸລະຫວ່າງ ອາຍຸ 41-45 ປີ ແລະ ສະຖານະພາບແຕ່ງງານແລ້ວ, ມີລະດັບການສຶກສາມັນ ແລະ ເປັນເຊື້ອຊາດລາວ. ຮູບແບບການດຳເນີນທຸລະກິດແມ່ນຮູບແບບກຳມະສິດເປັນວິສາຫະກິດສ່ວນບຸກຄົນ ເຊິ່ງເປັນ ວິສາຫະກິດຂະແໜງການຄ້າ, ການຜະລິດ ແລະ ການບໍລິການ. ສ່ວນແຫຼ່ງເງິນທຶນເລີ່ມຕົ້ນໃນການດຳເນີນທຸລະກິດ ແມ່ນທຶນຕົນເອງ ແລະ ແຫຼ່ງເງິນທຶນໝຸນວຽນໃນການດຳເນີນທຸລະກິດ ແມ່ນມາຈາກການກູ້ຢືມ ຈາກສະຖາບັນການເງິນຈຸລະພາກ. ໄລຍະ

ເວລາໃນການດຳເນີນທຸລະກິດ ແມ່ນ 5 ປີ-10 ປີ ແລະ ຈຸດປະສົງໃນການດຳເນີນທຸລະກິດແມ່ນຄວາມມັກສ່ວນຕົວ, ຄວາມຕ້ອງການຕະຫຼາດ, ແຮງຈູງໃຈດ້ານເສດຖະກິດ, ແຮງຈູງໃຈດ້ານສະຖານທີ່ ແລະ ເສັ້ນທາງຄົມມະນາຄົມ ເປັນຕົ້ນ. ສ່ວນສະພາບການເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ຂອງຜູ້ປະກອບການ ຈຸນລະວິສາຫະກິດ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ສາມາດສະຫຼຸບໄດ້ວ່າ ຜູ້ປະກອບການຈຸນລະວິສາຫະກິດ ສາມາດເຂົ້າເຖິງແຫຼ່ງເງິນທຶນ (ໄດ້ຮັບການອະນຸມັດ) ກວມເອົາພຽງແຕ່ 39% ເທົ່ານັ້ນ ສ່ວນທີ່ເຫຼືອແມ່ນຍັງບໍ່ສາມາດເຂົ້າເຖິງແຫຼ່ງທຶນ ສາເຫດແມ່ນຍ້ອນຜູ້ປະກອບການຈຸລະວິສາຫະກິດບໍ່ໄດ້ຖືບັນຊີຕາມລະບຽບບັນຊີວິສາຫະກິດ, ບໍ່ມີແຜນທຸລະກິດທີ່ຊັດເຈນ ແລະ ບໍ່ມີຫຼັກຊັບຄ້ຳປະກັນທີ່ພຽງພໍ ແລະ ສຳລັບ ການວິເຄາະລະດັບຄວາມສຳຄັນຂອງປັດໄຈ ທີ່ສາມາດເຂົ້າເຖິງແຫຼ່ງເງິນທຶນສະຖາບັນການເງິນຈຸລະພາກ ໃນ ເມືອງບຸນເໜືອ ແຂວງຜົ້ງສາລີ ສາມາດສະຫຼຸບໄດ້ວ່າ ໂດຍລວມ ຜູ້ປະກອບການແມ່ນໃຫ້ຄວາມສຳຄັນຕໍ່ກັບບັນດາປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງແຫຼ່ງທຶນແມ່ນຢູ່ໃນລະດັບຫຼາຍທີ່ສຸດ ດ້ວຍຄ່າສະເລ່ຍເທົ່າກັບ 4.37 ແລະ ຄ່າຜັນປຽນມາດຕະຖານເທົ່າກັບ 0.48. ໂດຍການຈັດອັນດັບລະດັບຄ່າສະເລ່ຍຂອງລະດັບຄວາມສຳຄັນແຕ່ລະປັດໄຈເລີ່ມແຕ່ຄ່າສະເລ່ຍທີ່ໃຫຍ່ໄປຫາປັດໄຈທີ່ມີຄ່າສະເລ່ຍນ້ອຍ ເຊິ່ງຜູ້ປະກອບການຈຸນລະວິສາຫະກິດໄດ້ໃຫ້ຄວາມສຳຄັນ ຕໍ່ກັບ ບັນດາປັດໄຈຕ່າງໆ ມີລາຍລະອຽດດັ່ງນີ້: 1) ປັດໄຈຫຼັກຊັບຄ້ຳປະກັນ (Collateral), 2) ປັດໄຈທາງດ້ານເງິນທຶນ (Capital), 3) ປັດໄຈດ້ານຄວາມສາມາດໃນການສ້າງລາຍໄດ້ (Capacity), 4) ປັດໄຈດ້ານຕົ້ນທຶນເງິນກູ້, 5) ປັດໄຈດ້ານການຄວບຄຸມ ແລະ ການຜ່ອນຜັນ (Control & Compliance), 6) ປັດໄຈທາງດ້ານຄຸນສົມບັດຂອງຜູ້ປະກອບການ (Character), 7) ປັດໄຈດ້ານທຸລະກິດ, 8) ປັດໄຈດ້ານຂະບວນການ ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍທີ່ສຸດ ຕາມລຳດັບ, ແລະ ສຸດທ້າຍຜູ້ປະກອບການຍັງໄດ້ໃຫ້ຄວາມສຳຄັນຕໍ່ກັບປັດໄຈດ້ານສະພາບທາງເສດຖະກິດ (Condition) ຢູ່ໃນລະດັບປານກາງ.

6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ພວກຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

7. ເອກະສານອ້າງອີງ

Aga, G. A., & Reilly, B. (2011). Access to credit and informality among micro and small enterprises in Ethiopia. *International Review of Applied Economics, 25*(3), 313–329.

Bangika, M. N., Mbuyu, D. B. M., & Lwimba, A. L. W. (2026). Determinants of SMEs' access to microfinance credit in Lubumbashi: An analysis based on multinomial logistic regression. *American Journal of Industrial and Business Management, 16*(2), 203–219.

Beck, T., & Demirg-Kunt, A. (2006). Small and medium-size enterprises: Access to finance as a growth constraint. *Journal of Banking & Finance, 30*(11), 2931–2943.

BoL, Northern Branch. (2025). *Economic Report for the Four Upper Northern Provinces, 2025*.

Charles, E. E., & Lianfen, Y. (2021). Examining the determinants of SMEs credit access from commercial banks in Tanzania. *European Journal of Business and Management, 13*(4), 1–13.

Industrial and Commerce department. (2026). *Annual of Industrial and Commerce department 6 month in 2026*. Phongsaly Industrial and Commerce department.

Khattighalath, L., Houangsengfah, S., & Indavong, D. (2020). Factors Relatated to the Access to Sources of Fundings of Hopitality Entrepreneurs in Luang Prabang Municipality, Luang Prabang Province. *Souphanouvong University Journal Multidisciplinary Research and Development*, *6*(3), 1518–1526. Retrieved from https://www.su-journal.com/index.php/su/article/view/303

Louanglat, K. (2017). *Factors affecting access to sources of finance for small and medium-sized enterprises (SMEs) among entrepreneurs in Naxaithong District, Vientiane Capital.* [Unpublished Master thesis]. National University of Laos.

Meressa, H. A. (2022). Micro- and small-scale enterprises' financing preference in line with POH

and access to credit: Empirical evidence from entrepreneurs in Ethiopia. *Journal of Innovation and Entrepreneurship, 11*(1), Article 54.

Ministry of planning and investment. (2021). *Socio-Economic Development Plan 2016–2021*. Ministry of planning and investment. Vientiane capital of Laos.

Office of industrial and commerce Boon Nua District. (2026). *Statistics of the Bureau of MSMESSs of quarter 1 in 2026*. Boon Nua District, Phongsaly Province.

Sengdala, C., & Her, P. (2022). Determinants of access to finance for SMEs: Evidence of Sayaboury Province, Lao PDR. *Souphanouvong University Journal of Multidisciplinary Research and Development, 8*(1), 59–66.

Sommer, C. (2022). Unintended consequences of microfinance: Effects on credit access for small- and medium-sized enterprises. *Journal of International Development, 34*(4), 843–865.

Woldehanna, T. (2018). Financial access to micro and small enterprise operators: The case of youth-owned firms in Ethiopia. *Ethiopian Journal of Economics, 26*(1), 67–100.

Yamane, T. (1967). *Statistics: An Introductory Analysis*, 2nd Edition, New York: Harper and Row.